ATTACHMENT 1

**San Diego Unified School District**
OFFICE OF THE GENERAL COUNSEL (619) 725-5630
4100 Normal Street, San Diego, CA 92103 Fax: (619) 725-5639

# ນະໂຍບາຍກ່ຽວກັບ ການດັດແປງເພື່ອຄວາມເຫມາະສົມ ສຳຫລັບພໍ່ແມ່ຜູ້ພິການ

ສູນກາງສຶກສາແຊນດີເອໂກ ມີນະໂຍບາຍສົມເຫດສົມຜົນ ເພື່ອພຍາຍາມຊ່ວຍເຫລືອພໍ່ແມ່ພິການຂອງນັກຮຽນ ໃນສູນກາງສຶກສາ ໃຫ້ໄດ້ຄວາມສະດວກ ເພື່ອເຂົ້າຮ່ວມໃນໂຄງການ ແລະ ພິທີຕ່າງໆ ທີ່ມີຢູ່ໃນໂຮງຮຽນຢ່າງ ເຫມາະສົມດີທີ່ສຸດເທົ່າທີ່ຈະດີໄດ້, ນອກຈາກວ່າ ຄວາມສະດວກເຫລົ່ານັ້ນ ແຕກຕ່າງເກີນກັບຮາກຖານເດີມ ຂອງໂຄງການ, ຫລື ເກີນກຳນົດຂອງການບໍຣິຫານ ຫລື ເກີນຄ່າໃຊ້ຈ່າຍຂອງສູນກາງສຶກສາ.

ຍ້ອນຄວາມຕ້ອງການ ໃຫ້ໃຊ້ຊັບພະຍາກອນທີ່ມີຈຳກັດ ຢ່າງລະມັດລະວັງ, ການປັງປຸງໃຫ້ທັນສໄມຂອງສູນ ກາງສຶກສານັ້ນ ອາດຈະບໍ່ໄດ້ຕາມຄວາມຕ້ອງການສເມີໄປ, ຫລື ບໍ່ທ່ວງທັນເວລາໂດຍທັນທີທັນໃດ, ຕາມຄວາມ ຕ້ອງການທີ່ພໍ່ແມ່ບາງຄົນຢາກໃຫ້ແກ້ໄຂຖາວອນ. ມັນຕ້ອງເປັນໄປຕາມຂັ້ນຕອນ, ສູນກາງສຶກສາຈະປະຕິບັດ ຕາມລະບຽບການທີ່ວາງໄວ້ ເພື່ອຊ່ອຍພໍ່ແມ່ຜູ້ຕ້ອງການຄວາມຊ່ວຍເຫລືອຈຳເປັນໃຫ້ໄດ້ຮັບການປ່ຽນແປງເພື່ອ ຄວາມສະດວກຢ່າງຮີບດ່ວນ.

ພໍ່ແມ່ຜູ້ໃດທີ່ຕ້ອງການຈຳເປັນ ກ່ຽວກັບການດັດແປງເພື່ອຄວາມເຫມາະສົມນັ້ນ, ຕ້ອງໄດ້ຂຽນຄຳຮ້ອງໄປຫາສູນ ກາງສຶກສາ. ຄຳຮ້ອງນີ້ຕ້ອງໄດ້ສົ່ງຫາ (1) ຜູ້ບໍຣິຫານປະຈຳໂຮງຮຽນ ບ່ອນທີ່ຂໍຮ້ອງໃຫ້ ດັດແປງເຫມາະສົມ ນັ້ນ; **(2)** ສົ່ງຫາ ຄະນະກຳມະການ 504/ADA ທີ່ 2351 Cardinal Lane, San Diego, CA 92123 ໄປຫາ (Sally Tucker). ເມື່ອເຂົາເຈົ້າໄດ້ຮັບໃບຄຳຮ້ອງນີ້ແລ້ວ, ຄະນະກຳມະການ 504/ADA ກັບຜູ້ຊ່ວຍຫົວຫນ້າບໍຣິ ຫານປະຈຳໂຮງຮຽນ, ຈະພຍາຍາມທຳການດັດແປງເພື່ອຄວາມເຫມາະສົມ ຕາມລະບຽບການຂອງນະໂຍບາຍ ພາຍໃນ **60** ວັນ ນັບແຕ່ວັນໄດ້ຮັບໃບຄຳຮ້ອງນີ້. ການຄິດໄລ່ກຳນົດເວລາ **60** ວັນນີ້ ແມ່ນອີງຕາມວັນທີທີ່ຄະນະ ກຳມະການ 504/ADA ໄດ້ຮັບໃບຄຳຮ້ອງ.

ຄະນະກຳມະການ 504/ADA ຈະຕອບມາຫາພໍ່ແມ່ດັ່ງຕໍ່ໄປນີ້: (1) ໃບແຈ້ງ ກ່ຽວກັບແຜນການດັດແປງໃຫມ່ອັນ ໃດອັນນຶ່ງ, **(2)** ທາງເລືອກເພື່ອດັດແປງເຫມາະສົມ, ອັນຊົ່ວຄາວ ຫລື ອັນຖາວອນ, ຫລື, **(3)** ກຳນົດຂອງ ສູນກາງສຶກສາ ທີ່ບໍ່ສາມາດຈັດໃຫ້ ເພາະວ່າ ບໍ່ຖືກກັບຮາກຖານເດີມຂອງໂຄງການ ຫລື ເກີນກຳນົດຂອງການບໍ ຣິຫານ. ໃບແຈ້ງການ ການຕິດສິນຂອງສູນກາງສຶກສາ ຍັງຈະໄດ້ແຈ້ງໃຫ້ຮູ້ກ່ຽວກັບສິດທິ ການຂໍອຸທອນ ຖ້າມີ ຕໍ່ໄປ, ສຳຫລັບຢູ່ພາຍໃນສູນກາງສຶກສານີ້.

ບໍ່ມີສິ່ງໃດທີ່ບັນຈຸຢູ່ໃນນະໂຍບາຍນີ້ ມີເຈດຈຳນົງດ້ານກົດຫມາຍເພື່ອກັກກັ້ນການຊ່ວຍເຫລືອແກ່ຜູ້ພິການ ເພີ້ມ ຂຶ້ນ ຫລື ຫລຸດລົງ ຫລື ມີກົດຫມາຍບັງຄັບໃຫ້ສູນກາງຕ້ອງກະທຳ ໂດຍອີງຕາມກົດຫມາຍຂອງຣັຖ ແລະ ຣັຖ ບານກາງບົ່ງໄວ້ນີ້.